ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

******************

ແຂວງ ຜົ້ງສາລີ

ເຈົ້າແຂວງ

ເລກທີ 010/ຈຂ.ຜລ

ຜົ້ງສາລີ, ວັນທີ 22/12/ 2015

# ຄຳສັ່ງ

## ຂອງເຈົ້າແຂວງ

## ວ່າດ້ວຍການຕອບໂຕ້ການລະບາດພະຍາດໂປລີໂອ ແລະ ສົ່ງເສີມການຢອດຢາ-ສັກຢາກັນພະຍາດ

- ອີງຕາມ ຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 63/ນຍ, ລົງວັນທີ 13 ພະຈິກ 2015 ວ່າດ້ວຍການຕອບໂຕ້ການລະບາດພະຍາດໂປລີໂອ ແລະ ສົ່ງເສີມການຢອດຢາ-ສັກຢາກັນພະຍາດ.

ເພື່ອສະກັດກັ້ນການແຜ່ລາມຂອງພະຍາດໂປລີໂອ ແລະ ເຮັດໃຫ້ຂະບວນການຢອດຢາ-ສັກຢາກັນພະຍາດທີ່ຈະຈັດຂຶ້ນທັງໝົດ 03 ຮອບໃຫ້ແຕ່ລະບ້ານໃນຂອບເຂດທົ່ວແຂວງບັນລຸຕາມຈຸດປະສົງ ແລະ ລະດັບຄາດໝາຍ.

## ເຈົ້າແຂວງອອກຄຳສັ່ງ:

1. ໃຫ້ພະແນກການອ້ອມຂ້າງແຂວງ, ຄະນະກຳມະທິການເພື່ອແມ່ ແລະ ເດັກທຸກຂັ້ນ, ທ່ານ ເຈົ້າເມືອງ, ຫ້ອງການສາທາລະນະສຸກເມືອງ, ແນວໂຮມ, ຊາວໜຸ່ມ, ແມ່ຍິງ ແລະ ນາຍບ້ານແຕ່ລະບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນ ແລະ ພາກສ່ວນຕ່າງໆ ຈົ່ງໄດ້ເອົາໃຈໃສ່ຄືດັ່ງລຸ່ມນີ້:

ກ). ເປັນເຈົ້າການໃນການຈັດຕັ້ງປະຕິບັດໃນວັນຢອດຢາ-ສັກຢາກັນພະຍາດແຫ່ງຊາດ ໃຫ້ບັນລຸຕາມຄາດໝາຍ 100% ໂດຍການມອບວຽກລະອຽດ ໃຫ້ແຕ່ລະພາກສ່ວນຮັບຜິດຊອບຕາມພາລະບົດບາດໜ້າທີ່ຂອງຕົນ.

ຂ). ອຳນວຍຄວາມສະດວກໃຫ້ທີມແພດໝໍ ທີ່ໄປເຄື່ອນໄຫວຢອດຢາ-ສັກຢາກັນພະຍາດຢູ່ຂັ້ນບ້ານ ໂດຍສະເພາະແມ່ນເຂດຫ່າງໄກສອກຫຼີກ ພ້ອມທັງຊ່ວຍປຸກລະດົມ ພໍ່ແມ່ປະຊາຊົນ ຜູ້ປົກຄອງເດັກທີ່ທຳການພະລິດຢູ່ໄຮ່, ນາ, ສວນໃຫ້ນຳເອົາລູກຫຼານຂອງຕົນມາບ້ານເພື່ອຮັບວັກຊີນກັນພະຍາດໂປລີໂອຕາມວັນເວລາທີ່ນັດໝາຍ.

ຄ). ມອບໃຫ້ພະແນກສຶກສາທິການ ແລະ ກິລາ ແຂວງ ເປັນເຈົ້າການໃນການຂຶ້ນບັນຊີ ເດັກນັກຮຽນໃນເກນອາຍຸເປົ້າໝາຍ 15 ປີລົງມາ ສົ່ງໃຫ້ທີມງານຢອດຢາ-ສັກຢາກັນພະຍາດ.

ງ). ໃຫ້ແຕ່ລະພາກສ່ວນເອົາໃຈໃສ່ໂຄສະນາ, ສຸຂະສຶກສາໃຫ້ປະຊາຊົນຢ່າງເປັນປົກກະຕິ ເພື່ອໃຫ້ເຂົ້າໃຈ ແລະ ເຂົ້າຮ່ວມຂະບວນການ ປອດຢາ-ສັກຢາກັນພະຍາດ. ຖ້າຫາກທ້ອງຖິ່ນໃດຍັງມີປະຊາຊົນບໍ່ໃຫ້ການຮ່ວມມື ໃຫ້ອຳນາດການປົກຄອງເປັນເຈົ້າການສຶກສາອົບຮົມ ຫຼື ປະຕິບັດຕາມມາດຕະການ ຖ້າຫາກຈຳເປັນ.

ຈ). ໃຫ້ຂະແໜງການກ່ຽວຂ້ອງຂັ້ນແຂວງ, ອຳນາດການປົກຄອງເມືອງຈົ່ງປະກອບສ່ວນໃນການຂົນສົ່ງວັກຊີນ ແລະ ອຸປະກອນທີ່ຈຳເປັນໂດຍສະເພາະ ແມ່ນການສົ່ງໄປທ້ອງຖິ່ນຫ່າງໄກສອກຫຼີກ ແລະ ທຸລະກັນ ດານ, ຖ້າຫາກມີຄວາມຈຳເປັນດ້ານງົບປະມານບໍ່ພຽງພໍ ໃຫ້ຄົ້ນຄ້ວາປະກອບສ່ວນ.

2. ໃຫ້ຂະແໜງສາທາລະນະສຸກທຸກຂັ້ນ ຈັດຕັ້ງທີມແພດໝໍ, ສ້າງແຜນການເຄື່ອນໄຫວປະຈຳວັນ, ຈັດຫາງົບປະມານ ແລະ ວັກຊີນໃຫ້ພຽງພໍ, ພົວພັນປະສານງານນຳອົງການປົກຄອງແຕ່ລະຂັ້ນໃຫ້ໜັກແໜ້ນ. ໃນແຕ່ລະວັນຕ້ອງລາຍງານຜົນການຈັດຕັ້ງປະຕິບັດການປອດຢາ-ສັກຢາກັນພະຍາດ ໃຫ້ຂັ້ນເທິງຂອງຕົນ, ຖ້າພົບພໍ້ຄວາມຫຍຸ້ງຍາກໃຫ້ລາຍງານອົງການປົກຄອງໂດຍດ່ວນ ເພື່ອຫາທິດທາງແກ້ໄຂໃຫ້ທັນກັບເວລາ.

3. ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮີບຮ້ອນຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ຕາມໜ້າທີ່ຂອງຕົນຢ່າງເຂັ້ມງວດ ແລະ ມີຄວາມຮັບຜິດຊອບສູງ.

4. ຄຳສັ່ງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ແທນ ເຈົ້າແຂວງ

ທອງລີ ເສົາສຸລິພົມ